ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ຈັດຕັ້ງພິທີປາຖະກະຖາມູນເຊື້ອ ວັນກຳມະກອນສາກົນ ຄົບຮອບ 133 ປີ



ເພື່ອເປັນການຫວນຄືນມູນເຊື້ອວັນກຳມະກອນສາກົນ ຄົບຮອບ 133 ປີ (01 ພຶດສະພາ 1886 - 01 ພຶດສະພາ 2019) ສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ (ສກບ.ທຫລ) ໄດ້ຈັດຕັ້ງການເລົ່າມູນເຊື້ອວັນກຳມະກອນສາກົນ ໃນວັນທີ 17 ພຶດສະພາ 2019 ທີ່ ສະໂມສອນສະຖາບັນການທະນາຄານ, ໂດຍການໃຫ້ກຽດປາຖະກະຖາຂອງສະຫາຍ ວັນນາ ດວງພະຈັນ ຮອງປະທານ ສູນກາງສະຫະພັນກຳມະບານລາວ (ສກລ), ພ້ອມນີ້ກໍ່ມີສະຫາຍ ພຸດທະໄຊ ສີວິໄລ ຄະນະປະຈຳພັກ ທຫລ, ສະຫາຍ ນາງ ຂັນແກ້ວ ຫຼ້າມະນີເງົາ ປະທານ ສກບ.ທຫລ, ພະນັກງານຈາກ ສກລ, ພະນັກງານທີ່ກ່ຽວຂ້ອງຂອງ ທຫລ ແລະ ສະມາຊິກກຳມະບານ ຈາກບັນດາຮາກຖານກຳມະບານ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດ ເຂົ້າຮ່ວມ 500 ກວ່າສະຫາຍ.

ໃນພິທີ, ທ່ານປະທານ ສກບ.ທຫລ ໄດ້ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານຂອງ ສກບ.ທຫລ ໃນປີທີ່ຜ່ານມາ ແລະ ທິດທາງ-ແຜນການຂອງ ສກບ.ທຫລ ໃນຕໍ່ໜ້າ ໂດຍສັງເຂບ. ຈາກນັ້ນ, ທ່ານຮອງປະທານ ສກລ ໄດ້ກ່າວວ່າ: ກ່ອນໜ້ານີ້ 133 ປີ ກໍ່ຄື ວັນທີ 01 ພຶດສະພາ 1886 ເປັນວັນທີ່ມີຄວາມໝາຍສຳຄັນ ສຳລັບຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານໃນທົ່ວໂລກ, ເຊິ່ງເປັນວັນທີ່ຊົນຊັ້ນກຳມະກອນໄດ້ເຕົ້າໂຮມກັນລຸກຮື້ຂຶ້ນຕໍ່ຕ້ານການກົດຂີ່ຂູດຮີດ ເພື່ອທວງເອົາສິດທິພື້ນຖານຂອງກຳມະກອນ, ຊາວຜູ້ອອກແຮງງານ ແລະ ຜົນປະໂຫຍດອັນຊອບທຳຂອງຕົນຈາກພວກນາຍທຶນ ແລະ ໄດ້ເລີ່ມເກີດຂຶ້ນຢູ່ທີ່ປະເທດສະຫະລັດອາເມຣິກາ ເປັນແຫ່ງທຳອິດ ແລະ ໄດ້ມີຖະແຫຼງການຂອງຊົນຊັ້ນກຳມະກອນຮຽກຮ້ອງໃຫ້ນາຍທຶນ ກຳນົດໃຫ້ກຳມະກອນ “ເຮັດວຽກ 8 ຊົ່ວໂມງ, ມີ 8 ຊົ່ວໂມງພັກຜ່ອນ ແລະ 8 ຊົ່ວໂມງຮ່ຳຮຽນ”, ເຊິ່ງໃນມື້ດັ່ງກ່າວນັ້ນ, ກຳມະກອນໄດ້ນັດຢຸດງານ 5.000 ແຫ່ງ.





ສະນັ້ນ, ວັນທີ 01 ພຶດສະພາ 1886 ຈຶ່ງກາຍເປັນວັນສຳຄັນຂອງຊົນຊັ້ນກຳມະຊີບ ແລະ ໄດ້ຖືກຈາລຶກໄວ້ໃນໜ້າ ປະຫວັດສາດຂອງຊົນຊັ້ນກຳມະຊີບແຫ່ງໂລກ ເປັນວັນທີ່ຜູ້ໃຊ້ແຮງງານທົ່ວໂລກ ປົດປ່ອຍຕົນເອງອອກຈາກການຖືກກົດຂີ່ຂູດຮີດຂອງພວກນາຍທຶນ ແລະ ໃນວັນດັ່ງກ່າວໃນທົ່ວໂລກໄດ້ຈັດໃຫ້ມີການໂຮມຊຸມນຸມເດີນຂະບວນ ເພື່ອລະນຶກເຖິງ ໄຊຊະນະຄັ້ງທຳອິດຂອງຊົນຊັ້ນ ກຳມະຊີບທົ່ວໂລກ.




**# ຂ່າວ-ພາບ: ວັນປະເສີດ ສີມບູນຂັນ.**

# ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ